ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

0983 ເລກທີ /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2020

# ແຈ້ງການ

**ຮຽນ :** ບັນດາຫົວໜ່ວຍທຸລະກິດນຳເຂົ້າ ແລະ ຈຳໜ່າຍພາຫະນະທົ່ວປະເທດ,

**ເລື່ອງ :** ໂຈະຊົ່ວຄາວການອອກອະນຸຍາດນຳເຂົ້າຍານພາຫະນະທີ່ນຳໃຊ້ພະລັງງານໄຟຟ້າທຸກປະເພດເພື່ອມາຈຳໜ່າຍນຳໃຊ້ທົ່ວໄປ.

- ອີງຕາມແຈ້ງການ ຂອງ ກົມຂົນສົ່ງ ເລກທີ 03092/ກຂສ, ລົງວັນທີ 10 ກຸມພາ 2020.
- ອີງຕາມບົດບັນທຶກກອງປະຊຸມ ທີ່ ກົມຂົນສົ່ງ ຄັ້ງວັນທີ 21 ກຸມພາ 2020.

ກົມການນຳເຂົ້າ ແລະ ສົ່ງອອກ (ກຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ເພື່ອເຮັດໃຫ້ວຽກງານຄຸ້ມຄອງການນຳເຂົ້າຍານພາຫະນະທີ່ນຳໃຊ້ໄຟຟ້າທຸກປະເພດ ສອດຄ່ອງກັບລະບຽບຫຼັກການຂອງພາກພື້ນ ແລະ ສາກົນ, ຮັບປະກັນໄດ້ມາດຕະຖານຄວາມປອດໄພໃຫ້ແກ່ຜູ້ຊົມໃຊ້. ສະນັ້ນ, ນັບແຕ່ວັນທີ 02 ມີນາ 2020 ເປັນຕົ້ນໄປ, ກົມການນຳເຂົ້າ ແລະ ສົ່ງອອກ ຈະໄດ້ໂຈະການອອກອະນຸຍາດນຳເຂົ້າພາຫະນະປະເພດລົດໄຟຟ້າທຸກປະເພດທີ່ນຳເຂົ້າມາຈຳໜ່າຍນຳໃຊ້ທົ່ວໄປ ໄວ້ເປັນການຊົ່ວຄາວ (ຕາມແຈ້ງການ ຂອງ ກົມຂົນສົ່ງ ເລກທີ 03092/ກຂສ, ລົງວັນທີ 10 ກຸມພາ 2020) ຈົນກວ່າ ກົມຂົນສົ່ງ ຈະສຳເລັດການສ້າງລະບຽບການຄຸ້ມຄອງຍານພາຫະນະປະເພດດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ສຸລິຍົນ ພິລາວົງ